**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 7 ກໍຣະກະດາ 2024 (07-07-2024)

---

**ຄໍາສັນຍາຂອງພຣະເຈົ້າເຣື່ອງກະສັດອົງນຶ່ງ**

**ຈຸດສໍາຄັນໃນບົດຮຽນ:** ພຣະເຈົ້າໄດ້ສັນຍາເຣື່ອງກະສັດອົງນຶ່ງແລະອານາຈັກອັນຕລອດໄປເປັນນິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າມັກການນໍາເອົາກຸ່ມທ່ອງທ່ຽວໄປອິສຣາເອນ. ຂ້າພະເຈົ້າມັກໄປຢ້ຽມຢາມສະຖານທີ່, ເປີດຂໍ້ຄວາມໃນພຣະຄັມພີ, ແລະການຊ່ວຍໃຫ້ຜູ້ຄົນເຫັນຮູບພາບພື້ນທີ່ຂອງປວັດສາດ. ຈຸດເດັ່ນອັນນຶ່ງໃນພາກເໜືອຂອງແຂວງຄາລີເລແມ່ນພູເຂົາອາແບວ, ຈາກເທິງພູ, ພວກເຮົາສາມາດມອງເຫັນທາງດ່ວນສາກົນແລ່ນຢູ່ໃກ້ກັບພູເຂົາ. ຜູ້ຄົນທີ່ມາຈາກຫຼາຍໆຊາດໄດ້ເດີນທາງໄປໃນທາງຫຼວງບູຮານນັ້ນ. ກະສັດທີ່ມີອໍານາດຈາກອັດຊີເຣັຽ, ບາບີໂລນ, ກຣີກ, ແລະໂຣມໄດ້ນໍາພາກອງທັບຂອງຕົນຜ່ານເຂດນັ້ນ. ກະສັດເຫຼົ່ານັ້ນຍິ່ງໃຫ່ຽ, ແຕ່ປະຈຸບັນນີ້ໄດ້ຈາກໂລກນີ້ໄປໝົດແລ້ວ. ອານາຈັກຂອງພວກເຂົາບໍ່ຄົງຢູ່. ໃນປວັດສາດໄດ້ເຫັນຫຼາຍຈັກກະພັດ, ລາດຊະວົງ, ແລະຫຼາຍອານາຈັກເກີດຂຶ້ນແລະກໍ່ສູນຫາຍໄປ. ໃນກະສັດທີ່ສູງຂອງອໍານາດແລະຄວາມຍິ່ງໃຫ່ຽຂອງພວກເຂົາ, ຜູ້ນໍາຂອງອານາຈັກເຫຼົ່ານັ້ນອາດຈະຄິດວ່າຄວາມຍິ່ງໃຫ່ຽຂອງພວກເຂົາຈະບໍ່ຕົກຕໍ່າລົງ, ແຕ່ປວັດສາດໄດ້ພິສູດໃຫ້ເຫັນວ່າ. ແມ່ນແຕ່ປະເທດທີ່ຍິ່ງໃຫ່ຽເທົ່າທີ່ສະຫະລັດກໍບໍ່ມີການຮັບປະກັນວ່າມັນຈະຄົງຢູ່ໄດ້. ໃນທີ່ສຸດ, ອານາຈັກດຽວເທົ່ານັ້ນທີ່ຈະຢືນຢູ່ຕລອດໄປ-ຄືອານາຈັກທີ່ພຣະເຢຊູຄຣິດປົກຄອງ. ກະສັດດາວິດຮູ້ດີເຖິງພອນຂອງພຣະເຈົ້າໃນຊີວິດຂອງເພິ່ນ. ດາວິດມີແຜນທີ່ຈະຮັບໃຊ້ພຣະເຈົ້າເປັນຢ່າງດີ. ແຕ່ພຣະເຈົ້າມີແຜນການທີ່ຍິ່ງໃຫ່ຽກ່ວາສໍາລັບດາວິດ.

*ສະຖານທີ່ປວັດສາດທີ່ໜ້າຈັບໃຈທີ່ສຸດທີ່ທ່ານເຄີຍໄດ້ໄປຢ້ຽມມາແມ່ນຫັຍງ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

## 1. 2 ຊາມູເອນ 7:8-9

*8. ດັ່ງນັ້ນ ຈົ່ງບອກແກ່ດາວິດຜູ້ຮັບໃຊ້ຂອງເຮົາວ່າພຣະຜູ້ເປັນເຈົ້າແຫ່ງຈັກກະວານໄດ້ກ່າວດັ່ງນີ້ເຈົ້າເປັນຄົນລ້ຽງແກະຢູ່ຕາມທົ່ງນາ*
*ເຮົາໄດ້ເລືອກເອົາເຈົ້າມາເປັນຜູ້ປົກຄອງຊາວອິດສະຣາເອນ ໄພ່ພົນຂອງເຮົາ. 9. ເຮົາໄດ້ຢູ່ກັບເຈົ້າໃນທຸກທີ່ທຸກບ່ອນທີ່ເຈົ້າໄປ ແລະ*
*ໄດ້ເຮັດໃຫ້ສັດຕູທັງຫລາຍຂອງເຈົ້າພ່າຍແພ້ ເຮົາໄດ້ສ້າງໃຫ້ເຈົ້າຍິ່ງໃຫຍ່ເທົ່າກັບຜູ້ນໍາທີ່ຍິ່ງໃຫຍ່ໃນໂລກນີ້.*

ສອງຊາມູເອນ 5-6 ໄດ້ບັນທຶກເວລາອັນສໍາຄັນຫຼາຍຢ່າງໃນຊີວິດຂອງດາວິດ, ເມື່ອເພິ່ນໄດ້ຂຶ້ນເປັນກະສັດປົກຄອງອິສຣາເອນ:

- ປະຊາຊົນໄດ້ເຈີມພະອົງເປັນກະສັດທີ່ເມືອງເຮັບໂຣນ (2ຊມອ 5:1-5).
- ດາວິດໄດ້ເອົາຊນະເຢຣູຊາເລັມແລະໄດ້ສ້າງເປັນນະຄອນຫຼວງຂອງຕົນ(ຂໍ້ 6-9).
- ຮີຣາມ, ກະສັດແຫ່ງເມືອງຕີເຣ, ໄດ້ສ້າງວັງດາວິດໃຫ້ສວຍງາມ (ຂໍ້ 10-12).
- ດາວິດໄດ້ເອົາຊນະຟີລິສຕິນ, ສັດຕູຂອງອິສຣາເອນຕາມແຄມຝັ່ງທະເລເມດິເຕີເຣນຽນ (ຂໍ້ 17-25).
- ດາວິດໄດ້ນໍາຫີບພັນທະສັນຍາໄປຍັງເຢຣູຊາເລັມ, ເຮັດໃຫ້ນະຄອນເຢຣູຊາເລັມເປັນນະຄອນຫຼວງທາງດ້ານການເມືອງແລະທາງວິນຍານຂອງອິສຣາເອນ (2ຊມອ 6:1-19).

ດາວິດໄດ້ຮັບຮູ້ພອນອັນຍິ່ງໃຫ່ຽຂອງພຣະເຈົ້າໃນຊີວິດຂອງລາວ (2ຊມອ 5:12). ໃນຂນະດຽວກັນການອວຍພອນຂອງພຣະເຈົ້າຕໍ່ຊີວິດຂອງລາວກໍ່ສ້າງຄວາມບໍ່ພໍໃຈໃນຕົວລາວ. ເປັນຫັຽງລາວຈຶ່ງຕ້ອງອາສັຍຢູ່ໃນວັງອັນສວຍງາມເມື່ອຫີບແຫ່ງພັນທະສັນຍາ, ອັນເປັນ

ຕົວແທນຂອງພຣະເຈົ້າໃນບັນດາປະຊາຊົນຂອງພຣະອົງ, ຍັງຊົງຕັ້ງຢູ່ໃນຜ້າເຕັນໃນເຢຣູຊາເລັມ (7:1-2)? ນາທານຜູ້ປະກາດພຣະທັມທີ່ເປັນນຶ່ງໃນທີ່ປຶກສາທີ່ເຊື່ອຖືຂອງດາວິດ, ແລະນາທານໄດ້ຊຸກຍູ້ໃຫ້ກະສັດເຮັດຕາມແຜນການອັນໃດກໍຕາມທີ່ລາວມີເພື່ອໃຫ້ກຽດແກ່ພຣະເຈົ້າ (7:3). ນາທານຄາດວ່າພຣະເຈົ້າຈະຊົມຊື່ນກັບດາວິດທີ່ສ້າງພຣະວິຫານໃຫ້ພຣະອົງ. ແນວໃດກໍ່ຕາມ, ພຣະເຈົ້າໄດ້ແກ້ໄຂແນວຄິດຂອງລາວ (ຂໍ້ທີ 4-7). ໃນ 450 ປີຫຼືຫຼາຍກ່ວານັ້ນນັບຕັ້ງແຕ່ພຣະເຈົ້າໄດ້ນຳເອົາປະຊາຊົນຂອງພຣະອົງອອກຈາກປະເທດເອຢິບ. ພຣະອົງບໍ່ເຄີຍຂໍໃຫ້ມີວິຫານຫຼືໄດ້ກ່າວຕຳນິຜູ້ນຳຂອງຊາວອິສຣາເອນວ່າບໍ່ໄດ້ສ້າງພຣະວິຫານໃຫ້ພຣະອົງຈັກຫຼັງ. ນາທານຄິດວ່າດາວິດສາມາດໃຫ້ກຽດແກ່ພຣະເຈົ້າໄດ້ໂດຍການສ້າງພຣະວິຫານໃຫ້ພຣະອົງ, ແຕ່ພຣະເຈົ້າຈະເລືອກທາງທີ່ໃຫ້ກຽດພຣະອົງ. ຄຳທີ່ແປວ່າ "ໃນຕອນນີ້" (ຂໍ້ 8) ຊີ້ບອກວ່າພຣະເຈົ້າກຳລັງຈະເປີດເຜີຍໃຫ້ນາທານຮູ້ເຖິງສິ່ງທີ່ພຣະອົງຕ້ອງການຈະສື່ສານກັບກະສັດອົງໃໝ່ຂອງພຣະອົງ. ພຣະເຈົ້າຢືນຢັນວ່າດາວິດເປັນຜູ້ຮັບໃຊ້ຂອງພຣະອົງເຊິ່ງແນ່ນອນເປັນສິ່ງທີ່ດີ. ແນວໃດກໍຕາມ, ພຣະເຈົ້າມີແນວທາງການກະທຳທີ່ແຕກຕ່າງໄປກ່ວາທີ່ດາວິດແລ່ນໄລ່ຕິດຕາມ. ນີ້ແມ່ນວິທີທີ່ພຣະເຈົ້າມັກຈະໃຊ້ເພື່ອສະແດງໃຫ້ເຫັນເຖິງການຊົງສະຖິດຢູ່ຂອງພຣະອົງໃນຊີວິດຂອງເຮົາແລະເປີດເຜີຍພຣະປະສົງຂອງພຣະອົງ.

- **ການອ່ານພຣະຄັມພີ:** ເມື່ອພວກເຮົາສະທ້ອນໃນພຣະຄຳຂອງພຣະເຈົ້າ, ພຣະອົງໄດ້ເຕືອນພວກເຮົາກ່ຽວກັບຄຳສັນຍາຂອງພຣະອົງແລະເປີດໃຈຂອງພວກເຮົາກັບໂອກາດໃໝ່ໆ.
- **ການອະທິຖານ:** ເມື່ອພວກເຮົາໃຊ້ເວລາສົນທະນາກັບພຣະເຈົ້າ. ພຣະອົງປະທັບໃນຈິດໃຈຂອງພວກເຮົາໃນການກະທຳທີ່ເປັນຕາຕະລາງ.
- **ຄຳແນະນຳຈາກຜູ້ເຊື່ອຄົນອື່ນໆ:** ບາງຄັ້ງພຣະເຈົ້າໃຊ້ຜູ້ເຊື່ອຄົນອື່ນໆທີ່ໃກ້ຊິດກັບພຣະອົງແລະຮູ້ຈັກພວກເຮົາດີເພື່ອອວຍພອນແລະນຳພາພວກເຮົາ.

ພຣະເຈົ້າໄດ້ຊີ້ນຳຊີວິດຂອງດາວິດຕັ້ງແຕ່ຍັງໜຸ່ມ. ເມື່ອລາວລ້ຽງຝູງແກະຂອງພໍ່ລາວ. ພຣະເຈົ້າໄດ້ນຳເອົາເຣື່ອງກ່ຽວກັບການເປັນກະສັດຂອງດາວິດ, ແລະພຣະອົງໄດ້ປົກປ້ອງດາວິດຈາກສັດຕູຂອງລາວ, ດາວິດມີພຣະວິນຍານບໍຣິສຸດຂອງພຣະເຈົ້າສະຖິດຢູ່ນຳ (5:12). ພຣະເຈົ້າຍັງໄດ້ກ່າວວ່າພຣະອົງຈະເຮັດໃຫ້ຊື່ສຽງຍິ່ງໃຫຍ່ສຳລັບດາວິດ. "ຄືກັບຜູ້ຍິ່ງໃຫຍ່ທີ່ສຸດໃນແຜ່ນດິນໂລກ" (7-9) ດາວິດຕ້ອງສົງສັຍວ່າເປັນຫຍັງພຣະເຈົ້າຈຶ່ງເວົ້າແບບນີ້ກັບລາວແຕ່ພຣະເຈົ້າຍັງບໍ່ສຳເຣັດ.

## 2. 2 ຊາມູເອນ 7:10-11

*10. ເຮົາຈະເລືອກບ່ອນສຳລັບຊາວອິສຣາເອນໄພ່ພົນຂອງເຮົາ 11. ແລະຈະໃຫ້ພວກເຂົາຢູ່ໃນບ່ອນນັ້ນ ໂດຍປາສຈາກການຣົບກວນທຸກຢ່າງ ນັບຕັ້ງແຕ່ພວກເຂົາເຂົ້າມາຢູ່ໃນແຜ່ນດິນນີ້ ພວກເຂົາຖືກພວກທະຫານຜູ້ເກັ່ງກ້າມາສູ້ຣົບ ແຕ່ວ່າດຽວນີ້ຈະບໍ່ມີເຫດການຢ່າງໃດເກີດຂຶ້ນອີກ ເຮົາຂໍສັນຍາວ່າ ເຮົາຈະຮັກສາເຈົ້າໃຫ້ພົ້ນຈາກສັດຕູທັງຫລາຍຂອງເຈົ້າ ແລະຈະໃຫ້ເຈົ້າມີເຊື້ອສາຍສືບຕໍ່ກັນໄປ.*

ພຣະເຈົ້າມັກຈະໃຊ້ຄົນອື່ນໃຫ້ພອນແກ່ປະຊາຊົນຂອງພຣະອົງ. **(1)** ພຣະອົງເບິ່ງແຍງເດັກນ້ອຍໂດຍຜ່ານທາງພໍ່ແມ່ຂອງເດັກ. **(2)** ພຣະອົງສອນລູກໆຂອງພຣະອົງຜ່ານທາງຜູ້ປົກຄອງ. **(3)** ຜູ້ມີຄວາມເຊື່ອ ໃຈກ້ວາງບໍລິຈາກເພື່ອຊ່ວຍເຫຼືອຄົນອື່ນໃນການເດີນທາງໄປເຜີຍແຜ່ຂ່າວປະເສີດ. ພຣະເຈົ້າໄດ້ຕັ້ງໃຫ້ດາວິດເປັນກະສັດປົກຄອງຊາວອິສຣາເອນ. ຢ່າງໃດກໍ່ຕາມ, ພຣະເຈົ້າບໍ່ໄດ້ຕັ້ງດາວິດໃຫ້ເປັນກະສັດເພື່ອໃຫ້ດາວິດຜູ້ດຽວເທົ່ານັ້ນທີ່ສາມາດປະສົບກັບການອວຍພອນຂອງພຣະເຈົ້າ, ແທນທີ່ຈະເປັນຢ່າງນັ້ນ, ພຣະເຈົ້າໄດ້ໃຊ້ດາວິດໃຫ້ນຳເອົາພຣະພອນອັນຍິ່ງໃຫຍ່ມາສູ່ພົລເມືອງຂອງອິສຣາເອນ, ເພາະວ່າພວກເຂົາເປັນປະຊາຊົນຂອງພຣະເຈົ້າເຊັ່ນດຽວກັນກັບປະຊາຊົນຂອງດາວິດ, ພຣະເຈົ້າໄດ້ຢືນຢັນວ່າພຣະອົງຈະສ້າງສະຖານທີ່ທີ່ປອດພັຍສຳລັບປະຊາຊົນຂອງພຣະອົງທີ່ດຳເນີນຊີວິດຢູ່. ພຣະອົງຈະເຮັດສ່ວນນີ້ຜ່ານຜົນສຳເຣັດທາງທະຫານຂອງດາວິດ, ຍ້ອນວ່າດາວິດໄດ້ເອົາຊນະສັດຕູທີ່ຢູ່ອ້ອມຂ້າງແລະປົກປ້ອງຂອບເຂດຊາຍແດນຂອງລາວ (8:10). ຢ່າງໃດກໍ່ຕາມ, ໃນທີ່ສຸດພຣະພອນແມ່ນການກະທຳຂອງພຣະເຈົ້າ, ບໍ່ແມ່ນດາວິດເປັນຜູ້ເຮັດ, ພຣະຜູ້ເປັນເຈົ້າໄດ້ກ່າວວ່າພຣະອົງຈະ "ປູກ" ປະຊາຊົນຂອງພຣະອົງຢູ່ໃນແຜ່ນດິນ (7:10). ຜູ້ທຳນວາຍອາໂມດແລະເຢເຣມີຢາຍັງ

ເຍີງໃຫ້ເຫັນຮູບພາບນີ້ເພື່ອພັນລະນາເຖິງການດູແລອັນອ່ອນໂຍນຂອງພຣະເຈົ້າສໍາລັບປະຊາຊົນຂອງພຣະອົງ (ອາໂມດ 9:15; ເຢເຣມີຢາ 31:28; 32:41). **(1)** ພຣະເຈົ້າຈະຈັດໃຫ້ພວກເຂົາຢູ່ໃນແຜ່ນດິນຄືກັບຊາວກະສິກອນທີ່ຫວ່ານເມັດພືດ. **(2)** ພຣະເຈົ້າຈັດຫາສິ່ງແວດລ້ອມທີ່ເໝາະສົມໃຫ້ເຂົາເຕີບໂຕ. **(3)** ປະຊາຊົນຄວນຍັ່ງ "ຮາກ" ແລະເຕີບໃຫຍ່ເປັນປະເທດທີ່ເຂັ້ມແຂງ. **(4)** ປະຊາຊົນຈະເກີດຜົນຕາມຈຸດປະສົງຂອງພຣະເຈົ້າ. ພຣະເຈົ້າຕ້ອງການໃຫ້ປະຊາຊົນຂອງພຣະອົງອາສັຍຢູ່ຢ່າງປອດພັຍໃນແຜ່ນດິນທີ່ພຣະອົງໄດ້ມອບໃຫ້ພວກເຂົາແລະ "ບໍ່ຖືກລົບກວນອີກ" (ຂໍ້ 10). ຊາວອິສຣາເອນອາສັຍຢູ່ໃນດິນແດນທີ່ອ້ອມຮອບໄປດ້ວຍສັດຕູຜູ້ທີ່ຫວັງຈະເອົາຊະນະພວກເຂົາ. ພວກເຮົາ, ຢູ່ໃນສະຫະລັດ, ມັນຈະບໍ່ກ່ຽວຂ້ອງກັບຄໍາສັນຍາຂອງພຣະເຈົ້າກ່ຽວກັບຄວາມປອດພັຍສໍາລັບອິສຣາເອນເພາະວ່າພວກເຮົາບໍ່ໄດ້ອາສັຍຢູ່ໃນແຜ່ນດິນທີ່ອາດຈະປ່ຽນແປງໄດ້ຄືກັບປະຊາຊົນຂອງພຣະເຈົ້າໃນສມັຍພັນທະສັນຍາເດີມ. ພຣະຜູ້ເປັນເຈົ້າຍັງໄດ້ອ້າງອີງລະຍະເວລາຂອງຜູ້ພິພາກສາຂອງອິສຣາເອນ (ຂໍ້ 11). ໃນສມັຍກ່ອນທີ່ຊາວອິສຣາເອນຂາດການນໍາທີ່ດີ ແລະ "ທຸກຄົນເຮັດຕາມທີ່ເຫັນວ່າຖືກຕ້ອງຕໍ່ພຣະອົງ" (ຜູ້ປົກຄອງ 21:25). ລະຍະນີ້ຖືກໝາຍໄວ້ໂດຍຮອບວຽນສີ່ສ່ວນ:

1. **ຄວາມບາບ:** ປະຊາຊົນລົງໄປຂາບໄຫ້ວຮູບເຄົາລົບ.
2. **ຄວາມທຸກທໍຣະມານ:** ພຣະຜູ້ເປັນເຈົ້າໄດ້ສົ່ງຄວາມທຸກທໍຣະມານເພື່ອເຮັດໃຫ້ປະຊາຊົນຂອງພຣະອົງຫັນກັບຄືນໄປຫາພຣະອົງ. ຄວາມທຸກລໍາບາກນີ້ເກີດຂຶ້ນໂດຍການກົດຂີ່ຂົ່ມເຫັງປະຊາຊົນຫຼືປະເທດຊາດ.
3. **ການອ້ອນວອນ:** ປະຊາຊົນຮ້ອງໄຫ້ອອກມາຫາພຣະເຈົ້າໃນການກັບໃຈໃໝ່ແລະອ້ອນວອນຂໍການຊ່ວຍເຫຼືອຂອງພຣະອົງ.
4. **ຄວາມລອດ:** ພຣະຜູ້ເປັນເຈົ້າໄດ້ນໍາເອົາຄວາມລອດ (ການປົດປ່ອຍ) ໂດຍຜ່ານຜູ້ພິພາກສາພຣະອົງໄດ້ຍົກຂຶ້ນມາເພື່ອຊ່ວຍປະຊາຊົນຂອງພຣະອົງ.

ພຣະເຈົ້າໄດ້ສັນຍາວ່າພຣະອົງຈະໃຊ້ດາວິດເພື່ອຢຸດເຊົາຄວາມບໍ່ໝັ້ນຄົງຂອງອິສຣາເອນແລະໃຫ້ປະຊາຊົນຂອງພຣະອົງໄດ້ຮັບການພັກຜ່ອນຈາກສັດຕຣູຂອງພວກເຂົາ. ຈາກນັ້ນນາທານໄດ້ບອກດາວິດ "ພຣະຜູ້ເປັນເຈົ້າເອງຈະສ້າງເຮືອນສໍາລັບທ່ານ" (ຂໍ້ 11) ຫຼັງຈາກນັ້ນທັງໝົດ, ລາວເປັນຜູ້ທີ່ຢາກສ້າງພຣະວິຫານຂອງພຣະເຈົ້າ.

## 3. 2 ຊາມູເອນ 7:12-16

*12. ເມື່ອເຈົ້າຕາຍໄປ ແລະຖືກຝັງໄວ້ກັບພວກບັນພະບູລຸດຂອງເຈົ້າ ເຮົາຈະແຕ່ງຕັ້ງຜູ້ນຶ່ງໃນເຊື້ອສາຍຂອງເຈົ້າໃຫ້ເປັນກະສັດ ແລະຈະເຮັດໃຫ້ຣາຊອານາຈັກຂອງຜູ້ນັ້ນເຂັ້ມແຂງຂຶ້ນ.13. ເຮົາຂໍບອກຢ່າງແນ່ນອນວ່າ ເຊື້ອສາຍຂອງລາວຈະປົກຄອງຕລອດໄປ ແລະລາວກໍຈະສ້າງວິຫານໃຫ້ແກ່ເຮົາ.14. ເຮົາຈະເປັນພໍ່ຂອງລາວແລະລາວຈະເປັນລູກຂອງເຮົາ ເມື່ອອິສຣາເອນເຮັດຜິດເຮົາຈະລົງໂທດເໝືອນດັ່ງພໍ່ລົງໂທດລູກ.15. ແຕ່ວ່າ ເຮົາຈະບໍ່ເຊົາຮັກລາວ ເໝືອນດັ່ງເຊົາຮັກຊາອູນ ຜູ້ທີ່ເຮົາໄດ້ປົດຕໍາແໜ່ງນັ້ນ ເພື່ອວ່າເຈົ້າຈະເປັນກະສັດ 16. ເຈົ້າຈະມີເຊື້ອສາຍຢູ່ຕລອດໄປ ແລະເຮົາຈະໃຫ້ຣາຊອານາຈັກຂອງເຈົ້າຄົງຢູ່ຊົ່ວນິລັນດອນ ຕໍາແໜ່ງຂອງເຈົ້າຈະບໍ່ມີທີ່ສິ້ນສຸດ."*

ພຣະເຈົ້າເຮັດໃຫ້ດາວິດເປັນຄໍາສັນຍາທີ່ບໍ່ໜ້າເຊື່ອ; ຢ່າງໃດກໍ່ຕາມ, ການບັນລຸເປົ້າໝາຍຄໍາສັນຍາຂອງພຣະເຈົ້າຈະບໍ່ເກີດຂຶ້ນໃນຊີວິດຂອງດາວິດ. ຂໍ້ພຣະຄັມພີນີ້ເຕືອນພວກເຮົາວ່າຈຸດປະສົງຂອງພຣະເຈົ້າດໍາເນີນຕໍ່ໄປແນວໃດ. ພຣະເຈົ້າໄດ້ໃຊ້ດາວິດເພື່ອຈຸດປະສົງຂອງພຣະອົງໃນຫຼາຍວິທີທາງ:

- ພຣະເຈົ້ານໍາເອົາຄວາມປອດພັຍຂອງປະຊາຊົນຂອງພຣະອົງໂດຍຜ່ານທາງດາວິດເອົາຊະນະສັດຕູຮຂອງຊາວອິສຣາເອນແລະປົກປ້ອງແຜ່ນດິນຂອງພວກເຂົາ.
- ໄຊຊະນະທາງທະຫານຂອງດາວິດໝາຍເຖິງອິສຣາເອນຄວບຄຸມຂອບເຂດເສັ້ນທາງການຄ້າຂາຍ.
- ດາວິດໄດ້ຊ່ວຍຊາໂລໂມນລູກຊາຍຂອງລາວໃຫ້ເປັນກະສັດແລະຊ່ວຍຊາໂລໂມນໃນການກະກຽມສ້າງພຣະວິຫານ.

ສັງເກດເຫັນວ່າວຽກງານບາງຢ່າງຂອງພຣະເຈົ້າກ່ຽວຂ້ອງກັບເວລາຂອງດາວິດເປັນກະສັດ. ໃນຂນະທີ່ວຽກອື່ນໆຂອງພຣະເຈົ້າເນັ້ນ

ໃສ່ອະນາຄົດຂອງປະຊາຊົນຂອງພຣະອົງ. ພຣະເຈົ້າບອກດາວິດວ່າເຊື້ອສາຍວົງຕະກຸນຂອງເຈົ້າຈະສ້າງວິຫານນັ້ນ. ນອກຈາກນັ້ນ, ພຣະເຈົ້າໄດ້ປະກາດວ່າ, "ເຮົາຈະຕັ້ງລາວປົກຄອງອານາຈັກຂອງລາວຕລອດໄປ" (ຂໍ້ 13). ພຣະເຈົ້າໄດ້ປະກາດວ່າຄວາມສັມພັນພໍ່ກັບລູກຈະມີຢູ່ລະຫ່ວາງພຣະອົງແລະເຊື້ອສາຍຂອງດາວິດ (ຂໍ້ 14). ໃນຖານະພຣະອົງເປັນພຣະບິດາໃນຟ້າສວັນຂອງເຊື້ອສາຍຂອງດາວິດ. ພຣະເຈົ້າໄດ້ສັນຍາວ່າພຣະອົງຈະເອົາການປົກຄອງມາສູ່ເຊື້ອສາຍຂອງດາວິດເພື່ອເຮັດໃຫ້ພວກເຂົາຫ່າງໄກຈາກຄວາມຊົ່ວຮ້າຍແລະການຜິດພາດ. ການຕີສອນດັ່ງກ່າວໄດ້ຢືນຢັນການປະທັບຢູ່ຂອງພຣະເຈົ້າໃນຊີວິດຂອງເຊື້ອສາຍດາວິດ, ກະສັດຂອງຊົນຊາດອິສຣາເອນ. ໃນເວລາດຽວກັນ, ພຣະເຈົ້າສັນຍາວ່າ, "ຄວາມຮັກອັນສັດຊື່ຂອງເຮົາຈະບໍ່ຫ່າງຫາຍອອກໄປຈາກລາວ" ຂໍ້. 15). ຄຳນີ້ໃນພາສາເຮັບເຣີແປວ່າ "ຄວາມຮັກທີ່ສັດຊື່" ເປັນຄຳສັບທາງທິສດີທີ່ດີສຸດຍອດເຊິ່ງມັນຈະໝາຍເຖິງຄວາມຮັກອັນພິເສດຂອງພຣະເຈົ້າສຳລັບປະຊາຊົນຂອງພຣະອົງ. ມັນເປັນຄຳທີ່ປາກົດຂຶ້ນເລື້ອຍໆໃນເພງສັຣເສີນ 136 ເພື່ອເນັ້ນໜັກເຖິງຄວາມຮັກອັນສັດຊື່ຂອງພຣະເຈົ້າ. "ຄວາມຮັກອັນສັດຊື່ຂອງພຣະອົງມີຢູ່ຕລອດໄປ" (ຂໍ້ 2). ພຣະເຈົ້າຊົງສຳແດງໃຫ້ເຫັນຄວາມແຕກຕ່າງຂອງການທຳງານຂອງພຣະອົງໃນຊີວິດຂອງຊາອູນກັບການທຳງານໃນອານາຄົດຂອງພຣະອົງໃນຊີວິດຂອງເຊື້ອສາຍຂອງດາວິດ. ຄວາມຮັກອັນສັດຊື່ຂອງພຣະເຈົ້າຈະບໍ່ອອກໜີໄປຈາກເຊື້ອສາຍຂອງດາວິດດັ່ງທີ່ເກີດຂຶ້ນກັບຊາອູນເມື່ອພິສູດວ່າຕົນບໍ່ສັດຊື່. ອີກອັນນຶ່ງ, ພຣະຜູ້ເປັນເຈົ້າໄດ້ຢືນຢັນຕໍ່ດາວິດວ່າ, "ຣາຊວົງແລະອານາຈັກຂອງເຈົ້າຈະຕັ້ງຢູ່ຕໍ່ໜ້າເຮົາຕລອດໄປ" (2 ຊາມູເອນ 7:16). ພຣະເຈົ້າຈະແຕ່ງຕັ້ງກະສັດຂອງພຣະອົງ, ເຊື້ອສາຍຂອງດາວິດ, ປົກຄອງອານາຈັກຕລອດໄປເປັນນິດ. ໂຊໂລໂມນໄດ້ຮັບການປົກຄອງຕໍ່ຈາກພໍ່ຂອງລາວເມື່ອກະສັດດາວິດຕາຍ, ຊາໂລໂມນໄດ້ສ້າງພຣະວິຫານສຳລັບພຣະຜູ້ເປັນເຈົ້າໃນນະຄອນເຢຣູຊາເລມແລະອຸທິດຕົນຕໍ່ໜ້າຊາວອິສຣາເອນທັງໝົດ (1 ກະສັດ 8) ພຣະເຈົ້າໄດ້ອວຍພອນການປົກຄອງຂອງຊາໂລໂມນຢ່າງອຸດົມສົມບູນ, ແລະເມື່ອຊາໂລໂມນເຮັດສິ່ງທີ່ບໍ່ຖືກຕ້ອງ, ຄຳສັນຍາຂອງພຣະເຈົ້າກໍ່ບໍ່ຢຸດຍັ້ງ, ແຕ່ຍັງສືບຕໍ່ຕະກຸນຂອງຊາໂລໂມນ. ພຣະເຈົ້າໄດ້ຕັ້ງປະຊາຊົນຂອງພຣະອົງເປັນປະເທດຊາດ, ແລະພຣະອົງຍັງມີຈຸດປະສົງສຳລັບພວກເຂົາເຈົ້າ. ຈຸດປະສົງຂອງພຣະເຈົ້າລວມມີກະສັດອື່ນຈາກດາວິດເປັນຕົ້ນມາ, ຜູ້ທີ່ພຣະເຈົ້າຈະສ້າງຂຶ້ນໃນອານາຈັກອັນຕລອດໄປເປັນນິດ; **ພຣະເຢຊູ**, ສຳເລັດສົມບູນຂອງຄຳສັນຍາຂອງພຣະເຈົ້າກັບດາວິດ.

## ນຳໃຊ້ໃນຊີວິດ

ພຣະເຈົ້າໄດ້ສັນຍາເຣື່ອງກະສັດອົງນຶ່ງແລະອານາຈັກອັນຕລອດໄປເປັນນິດ. ເລືອກນຶ່ງຂອງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງໝັ່ນຊອກຫາການງານຂອງພຣະເຈົ້າໃນຊີວິດຂອງທ່ານ.** ຮັກສາການສື່ສານລະຫ່ວາງທ່ານກັບພຣະເຈົ້າ, ດັ່ງນັ້ນພຣະອົງຈຶ່ງສາມາດເປີດເຜີຍຈຸດປະສົງຂອງພຣະອົງເພື່ອໃຫ້ທ່ານມີສ່ວນຮ່ວມໃນວຽກງານໃນອານາຈັກຂອງພຣະອົງ.
- **ຈົ່ງກ້າວໄປສູ່ການເຮັດໃຫ້ຈຸດປະສົງຂອງອານາຈັກທີ່ພຣະເຈົ້າເປີດເຜີຍຕໍ່ທ່ານໃຫ້ຄົບເຕັມ.** ທວງຖາມພຣະເຈົ້າໃຫ້ຊ່ວຍທ່ານໄດ້ເຫັນຊັດເຈນຫຼາຍຂຶ້ນ ຈຸດປະສົງທີ່ພຣະອົງມີສຳລັບທ່ານ, ບາງທີຂັ້ນຕອນທຳອິດແມ່ນການຖາມຜູ້ນຳໂບດວ່າ ທ່ານຈະຮັບໃຊ້ໄດ້ແນວໃດ, ອາດຈະໂທຣະສັບຫາຄົນຫຼືຂຽນຂໍ້ຄວາມສົ່ງໄປ.
- **ມຸ້ງໝັ້ນກັບພຣະຜູ້ເປັນເຈົ້າເພື່ອຫຼີກເວັ້ນການໂຕ້ຖຽງແລະການແບ່ງປັນຄວາມຄິດເຫັນກ່ຽວກັບຜູ້ນຳ.** ແທນທີ່ຈະເປັນແນວນັ້ນ, ອະທິຖານເພື່ອພວກເພິ່ນເພື່ອໃຫ້ນຳພາຢ່າງສລາດ, ແລະອະທິຖານສຳລັບວິທີສະເພາະທີ່ທ່ານສາມາດສນັບສນູນຜູ້ນຳໃນໂບດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**